**<u>ແຜນການສອນ:</u>**

## ບົດຮຽນໂຮງຮຽນວັນອາທິດ

## ວັນອາທິດ ທີ 08 ພຶສຈິກາ 2009 (11-08-2009)

---

## <u>ຊົມຊື່ນຍິນດີກັບການທົດລອງ:</u>

**<u>ຂໍ້ພຣະຄັມພີໃນບົດຮຽນ</u>**: (ຢາໂກໂບ 1:2-18)

**<u>ບົດຮຽນນີ້ເວົ້າກ່ຽວກັບຫຍັງ?:</u>** ບົດຮຽນນີ້ກ່ຽວກັບການປະເຊີນໜ້າກັບການທົດລອງໃນຊີວິດ. ໃນເວລາທີ່ຖືກເຄາະຮ້າຍ, ຄຣິສຕຽນຄວນມີຄວາມປິຕິຍິນດີດ້ວຍຄວາມດີຂອງພຣະເຈົ້າ ແລະເຕັມໄປດ້ວຍຄວາມເຊື່ອໝັ້ນໃນໃຈ ກັບສິ່ງທີ່ຈະປາກົດຂຶ້ນພາຍຫລັງການທົດລອງ.

**<u>ເປັນຫຍັງບົດຮຽນນີ້ຈຶ່ງສຳຄັນ?:</u>** ບົດຮຽນນີ້ມີຄວາມສຳຄັນກໍເພາະວ່າ ການທົດລອງແມ່ນພາກສ່ວນນຶ່ງຂອງຊີວິດ ແລະບໍ່ແມ່ນການພົບຢ່າງນີ້ເປັນການຫຍຸ້ງຍາກເກີນກວ່າຄວາມອົດທົນຂອງພວກເຮົາ. ຢ່າງໃດກໍຕາມ, ໃຫ້ສັງເກດເບິ່ງບັນຫາການທົດລອງງຂອງພວກເຮົາ ໃສ່ກັບພຣະຄຳຂອງພຣະເຈົ້າເຖິງຄວາມຈິງທີ່ຕ້ອງເຮັດໃຫ້ພວກເຮົາມີຄວາມຊື່ນຊົມຍິນດີ.

**<u>ບົດຮຽນນີ້ສາມາດມີຜົນສະທ້ອນຕໍ່ຊີວິດຂອງທ່ານຢ່າງໃດ?:</u>**
ບົດຮຽນນີ້ຈະຊ່ອຍໃຫ້ທ່ານກ້າທີ່ປະເຊີນໜ້າກັບການທົດລອງ ແລະສິ່ງຊົ່ວຮ້າຍທີ່ເກີດຂຶ້ນໃນຊີວິດຂອງທ່ານ. ທ່ານຈະຮູ້ໄດ້ວ່າ ພຣະເຈົ້າຊົງເປັນຜູ້ທຳງານໃນຊີວິດຂອງທ່ານ, ໃນຂນະທີ່ທ່ານຢູ່ໃນຖ້າມກາງການທົດລອງ ແລະຍັງຢູ່ໃນການທ້າທາຍໃນການຕອບໂຕ້ກັບສິ່ງຊົ່ວຮ້າຍນັ້ນດ້ວຍການຝຶກຝົນຄວາມເຊື່ອຂອງທ່ານໃນພຣະເຈົ້າ ແລະສແວງຫາສະຕິປັນຍາຈາກພຣະອົງ.

**<u>ການຈັດຕຽມ ແລະແຜນການສອນຂອງຄຣູ:</u>**

1. ອະທິຖານຂໍການຊົງນຳຈາກພຣະວິນຍານບໍຣິສຸດ ກ່ອນສິ່ງອື່ນໝົດ.
2. ສຶກສາຂໍ້ພຣະຄັມພີທີ່ຈະໃຊ້ໃນບົດຮຽນນີ້.
3. ຖາມລື້ມຄວາມຊົງຈຳຂອງນັກຮຽນໃນບົດຮຽນອາທິດແລ້ວນີ້.
4. ອ່ານ ແຜນການສອນ ໝາຍບ່ອນສຳຄັນ, ປັບປຸງ, ແກ້ໄຂ, ຈົດບັນທຶກ ແລະ ອື່ນໆ........
5. ແຈກຢາຍບົດຮຽນໃຫ້ນັກຮຽນທຸກຄົນ

**<u>ແນະນຳ</u>**: . ບອກນັກຮຽນວ່າພຣະທັມອາທິດແລ້ວນີ້ທີ່ທ່ານຢາໂກໂບ1:19-25 ແລະ 2:14-26.

- ນຳພານັກຮຽນເຂົ້າສູ່ພາກການສຶກສາບົດຮຽນ, " ການຊົມຊື່ນຍິນດີກັບການທົດລອງຂອງທ່ານ". ຊີ້ຊີ້ໃຫ້ເຫັນເຖິງການເລີ້ມຕົ້ນຫລາຍສິ່ງຫລາຍຢ່າງຂອງທ່ານຢາໂກໂບ, ບັນດາຜູ້ທີ່ເຊື່ອເຂົາເຈົ້າຖືກການທ້າທາຍໃຫ້ດຳຣົງຊີວິດທີ່ປາສຈາກຄວາມເຊື່ອຂອງເຂົາເຈົ້າ. ສິ່ງເຫລົ່ານີ້ເປັນຄວາມຈິງໃນບົດຮຽນໃນອາທິດທີ່ແລ້ວນີ້ ແລະການສຶກສາໃນອາທິດນີ້ກໍເປັນຄວາມຈິງເທົ່າໆກັນ.

- ໃນເມື່ອພວກເຮົາ ຫລືຄົນອື່ນໆໄດ້ປະເຊີນກັບການພິຈາຣະນາຄະດີ, ພວກເຮົາເຄີຍໄດ້ຕອບສນອງແນວໃດ? ພວກເຮົາມີໃຜແດ່ທີ່ໄດ້ອ້າງເຖິງ "ການສັຣເສີນພຣະເຈົ້າ"?

1. **<u>ມີເຫດຜົນທີ່ຈະຊົມຊື່ນອີກ:</u>** (ຢາໂກໂບ 1:2-4)

- ຂໍໃຫ້ນັກຮຽນຜູ້ນຶ່ງອາສາສມັກອ່ານ ພຣະທັມຢາໂກໂບ 1:2-4
- "ເມື່ອຄວາມສຸກສຳຣານ" ເປັນບົດເພງສັຣເສີນຂອງຄະນະບັບຕິສ.ຂໍໃຫ້ນັກຮຽນຕອບຄຳຖາມດັ່ງຕໍ່ໄປນີ້:
  - ພວກເຮົາຈະພໍໃຈກັບສິ່ງແວດລ້ອມໄດ້ແນວໃດ? - ເປັນຫຍັງພວກເຮົາຈຶ່ງສົມຄວນພໍໃຈກັບສິ່ງນັ້ນ?
  - ເປັນຫຍັງຈຶ່ງໃຫ້ພວກເຮົາສັຣເສີນດ້ວຍສຸດຈິດສຸດໃຈຂອງເຮົາ? -ແມ່ນຫຍັງທີ່ຜູ້ທີ່ເຊື່ອມີຄວາມຫວັງ?
- ການທີ່ຮູ້ຈັກສະພາບແວດລ້ອມຜົນກະທົບກັບມາຈາກບົດເພງສັຣເສີນນັ້ນມີຄວາມໝາຍຢ່າງໃດ?
- ໃນເວລາທີ່ທ່ານເຫັນຄົນນຶ່ງຄົນໃດຕົກຢູ່ໃນສະພາບແວດລ້ອມຫຍຸ້ງຍາກໃນການສັຣເສີນ, ໃນຄວາມຊື່ນຊົມຍິນດີ, ໃນຄວາມເຊື່ອ, ແລະໃນການໃຫ້ກຽດແດ່ພຣະເຈົ້າແລ້ວທ່ານຈະເຮັດແນວໃດ? ທ່ານສາມາດໃຫ້ຕົວຢ່າງມາໄດ້ບໍ່?
- ຂໍໃຫ້ນັກຮຽນອ່ານພຣະທັມຢາໂກໂບ 1:2-4; ພຣະທັມເອເຟໂຊ 5:18-21, ແລະໂຣມ 8:28.
- ໂປໂລ ແລະຢາໂກໂບໄດ້ເວົ້າເຣື່ອງວ່າພວກເຮົາຈະຕອບສນອງແນວໃດໃນເມື່ອການທົດລອງເຂົ້າມາ?

**<u>ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະຄັມພີ:</u>** (ຢາໂກໂບ 1:2-4)

1. ເປັນຫຍັງຄຣິສຕຽນໃນສມັຍພຣະຄັມພີພາກພັນທະສັນຍາໃໝ່ຈຶ່ງຕ້ອງປະເຊີນກັບການທົດລອງ?
2. ບັນດາຜູ້ທີ່ເຊື່ອໃນສມັຍນີ້ກໍໄດ້ພົບການທົດລອງຄືກັບບໍ່?
3. ຜູ້ທີ່ເຊື່ອຈະຕ້ອງຕອບສນອງຕໍ່ອິດທິພົນຂອງການທົດລອງທີ່ຕໍ່ສູ້ກັບການເປັນພຍານຂອງເຂົາເຈົ້າຢ່າງໃດ?
4. ແມ່ນຫຍັງທີ່ເປັນເປົ້າໝາຍສຸດທ້າຍຂອງຄວາມທຸກຍາກລຳບາກ?

2. **<u>ຂໍອກາຫາສະຕິປັນຍາທີ່ມາຈາກພຣະເຈົ້າ:</u>** (ຢາໂກໂບ 1:5-11)

- ໃຫ້ນັກຮຽນຜູ້ນຶ່ງອາສາສມັກອ່ານ ພຣະທັມ ຢາໂກໂບ 1:5-11
- ຂໍໃຫ້ເປີດປຶ້ມເພງສັຣເສີນໄປຫາເພງທີ່ຊື່ວ່າ: "ຂໍພຣະເຢຊູຊົງນຳພາເຮົາ"ແລ້ວຂໍໃຫ້ນັກຮຽນຂຽນສິ່ງທີ່ໄດ້ຮຽນຈາກເພງນີ້ນັ້ນມີອັນໃດແດ່?
- ສົນທະນາເພື່ອໃຫ້ໄດ້ຄຳຕອບດັ່ງຕໍ່ໄປນີ້: ໃນເມື່ອອັນຕລາຍເຂົ້າມາໃນຊີວິດຂອງທ່ານ ຫລືໃນຊີວິດຂອງຜູ້ທີ່ທ່ານຮັກທ່ານຈະອະທິຖານຢ່າງໃດ?
- ທ່ານໄດ້ທູນຖາມພຣະເຈົ້າວ່າຢ່າງໃດ?
- ຢາໂກໂບບອກວ່າ ພວກເຮົາຄວນທູນຂໍພຣະເຈົ້າເຈົ້າວ່າຢ່າງໃດ?
- ຂໍໃຫ້ນັກຮຽນຜູ້ນຶ່ງອາສາສມັກອ່ານພຣະທັມ 1 ໂກຣິນໂທ 1:20; 2:4-6,13; 3:19-20. ພຣະຄຳເຫລົ່ານີ້ໄດ້ເວົ້າເຖິງເຣື່ອງສະຕິປັນຍາວ່າແນວໃດ?
- ເບິ່ງໃນຂໍ້ທີ 8 ເຣື່ອງຊາຍທີ່ລັງເລໃຈບໍ່ແນ່ບໍ່ນອນໃນທາງຂອງຕົນ. ຄົນນີ້ຫັນໄປທາງນຶ່ງແລະກໍໄປໃນທາງກົງກັນຂ້າມ. ຜູ້ຂຽນບົດຮຽນລາວໄດ້ເວົ້າເຖິງຄວາມອ່ອນແອລະຫວ່າງຜູ້ທີ່ເຊື່ອກັບຜູ້ທີ່ບໍ່ເຊື່ອ,ລະຫວ່າງຄວາມເຊື່ອຟັງ ແລະຄວາມສົງສັຍ, ລະຫວ່າງການໄວ້ວາງໃຈ ກັບການທີ່ບໍ່ໄວ້ວາງໃຈ.
- ເປັນຫຍັງຢາໂກໂບຈຶ່ງວ່າເປັນການດີທີ່ສຸດຄືເປັນຄົນຖ່ອມໃຈ?

**<u>ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະຄັມພີ:</u>** ຢາໂກໂບ 1:5-11

1. ແມ່ນຫຍັງໃຜເປັນແຫລ່ງທີ່ມາຂອງສະຕິປັນຍາ?
2. ຢາໂກໂບໄດ້ພັລນາຜູ້ທີ່ຄອນແຄນບໍ່ແນ່ຂີ້ສົງສັຍນັ້ນວ່າຈະເປັນແນວໃດ?
3. ທ່ານສາມາດວາດພາບຢ່າງອື່ນໄດ້ບໍ່?
4. ຜູ້ທີ່ເຊື່ອສາມາດຫລີກລ້ຽງຈາກການລັງເລໃຈ, ສົງສັຍໄດ້ຢ່າງໃດ?
5. ເປັນເພາະເຫດໃດຄົນທີ່ຮັ່ງມີຈຶ່ງພາດໂອກາດ?
6. ສິ່ງອັນຕະລາຍໄດ້ທົດສອບຄວາມເຊື່ອຂອງຜູ້ທີ່ເຊື່ອຢ່າງໃດແດ່? ເຂົາເຈົ້າຄວນຈະເຮັດແນວໃດຕໍ່ການທົດສອບຢ່າງນັ້ນ?

**3 . <u>ພຣະເຈົ້າດີຢູ່ທຸກເວລາ:</u>** (ຢາໂກໂບ 1:12-18)

- ໃຫ້ນັກຮຽນຜູ້ນຶ່ງອາສາສມັກອ່ານ ພຣະທັມ ຢາໂກໂບ 1:12-18
- ອີງຕາມພຣະທັມຢາໂກໂບ 1:13-14, ແມ່ນໃຜເປັນແຫລ່ງທີ່ມາຂອງການຫລອກລວງ?
- ຢາໂກໂບບົດທີ 1:10-11 ໄດ້ພັລນາເຖິງວົງວຽນຊີວິດຂອງຫຍ້າ ແລະດອກໄມ້ຕ່າງໆ. ໃນຂໍ້14-15 ຢາໂກໂບໄດ້ພັລນາເຖິງວົງວຽນຊີວິດຂອງຄວາມບາບ ແລະຄວາມປາຖນາ. ໃຫ້ຂີດວົງວຽນຊີວິດທັງສອງນີ້ໃສ່ກະດານ ແລະປຽບທຽບໃສ່ກັນເບິ່ງ. ຊຶ່ງບົ່ງບອກເຖິງການຕາຍທັງສອງໄດ້. ແມ່ນຫຍັງທີ່ໃຫ້ກຳເນີດຄວາມຜິດບາບ ແລະນຳໄປເຖິງຄວາມຕາຍ?
- ຢາໂກໂບໄດ້ສເນີໃຫ້ເລືອກສິ່ງທີ່ຢູ່ກົງກັນຂ້າມ. ພວກເຮົາສາມາດເລືອກທີ່ຈະຍອມຕໍ່ການຫລອກລວງ ຫລືປົກປ້ອງກັນການຫລອກລວງ. ພວກເຮົາຈະເລືອກເອົາການຖວາຍຕົວແດ່ພຣະເຈົ້າ ຫລືມອບຕົວໃຫ້ຄວາມຜິດບາບ.

**<u>ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະຄັມພີ:</u>** ຢາໂກໂບ 1:12-18

1. ທ່ານຈະພັລນາວາດພາບວົງວຽນຊີວິດແຫ່ງຄວາມບາບໄປແນວໃດ?
2. ການອວຍພອນຢ່າງໃດທີ່ບັນດາຜູ້ທີ່ມີຄວາມອົດທົນຕໍ່ການທົດລອງຕ່າງໆຈະໄດ້ຮັບ?
3. ຕົວຢ່າງການຈິ່ມຂອງອາດາມຄົນດຽວທີ່ຕໍ່ວ່າພຣະເຈົ້າສຳລັບການທົດລອງນັ້ນມີຜົນສະທ້ອນໄປແນວໃດ?
4. ຕົວຢ່າງການຈິ່ມຕໍ່ວ່າພຣະເຈົ້າຂອງຄົນທຸກມື້ນີ້ທີ່ໄດ້ຮັບ, ຄວາມທຸກລຳບາກບໍ່, ຫລືຖືກການທົດລອງ?

## <u>ພຣະຄັມພີແຫ່ງຄວາມຈິງ</u>

- ພວກເຮົາສາມາດວັດແທກການທຳງານຂອງພຣະເຈົ້າໃນຊີວິດຂອງພວກເຮົາໂດຍການທີ່ພຣະອົງໄດ້ຊົງນຳພວກເຮົາອອກຈາກການທົດລອງຕ່າງໆ. ແຕ່ກໍຍັງຈະມີການທົດລອງພວກເຮົາໄປອີກຍາວນານ.
- ພວກເຮົາສາມາດມີຄວາມຊື່ນຊົມຍິນດີຊຶ່ງພຣະເຈົ້າໃຊ້ທົດສອບເພື່ອຊ່ອຍໃຫ້ພວກເຮົາເຕີບໃຫຍ່ຂຶ້ນໄປເລື້ອຍໆ.
- ພວກເຮົາສາມາດທູນຂໍສະຕິປັນຍາຈາກພຣະເຈົ້າເພື່ອໃຫ້ຮູ້ຈັກວິທີການທົນສູ້ຕໍ່ການທົດລອງດ້ວຍຄວາມໄວ້ວາງໃຈໃນພຣະອົງ.